# ການປູກຂີງດຳ ( *Boesenbergia sp* ) ແບບປະສົມປະສານກັບພືດກະສິກຳ ທີ່ ເມືອງໂພນໄຊ, ແຂວງຫຼວງພະບາງ

ຂີງດຳ ນອນຢູ່ໃນວົງຕະກຸນ Zingiberaceae ຊື່ວິທະຍາສາດແມ່ນ *Boesenbergia SPP* ມີຖິ່ນກຳເນີດຢູ່ໃນ ເອເຊັຍ ເຂດຮ້ອນ ເຕີບໂຕໄດ້ໃນເຂດປ່າຊື້ນປຽກຊຸ່ມ, ດິນຟຸ່ຍ, ດິນປົນຊາຍ ເປັນພືດລົ້ມລຸກ ລຳຕົ້ນເປັນກາບກ້ານໃບໂອບ ຂຶ້ນສູງປະມານ 20-50 ຊັງຕີແມັດ. ຫົວເປັນສີມ່ວງດຳ, ມີກິ່ນທີ່ມີສານນຳໄປສະກັດເປັນຢາສະໝຸນໄພເຊັ່ນ: ຢາບຳລຸງຮ່າງກາຍ, ຢາດີທ້ອງຍື່ງເປັນຕົ້ນ. ໃນປະຈຸບັນຂີງດຳນິຍົມກັນປູກຫຼາຍຢູ່ ແຂວງບໍລິຄຳໄຊ, ນະຄອນຫຼວງວຽງຈັນ, ເຂດເມືອງວັງວຽງ, ແຂວງວຽງຈັນ, ແຂວງໄຊຍະບູລີ, ແຂວງອຸດົມໄຊ ແລະ ແຂວງຫຼວງພະບາງ. ຂີງດຳຂະ ຫຍາຍພັນດ້ວຍຫົວໂດຍນຳເອົາຫົວຂີງມາອາ ນາໄມແກະສ່ວນທີ່ເປັນຫົວເກົ່າອອກແລ້ວ ເອົາຫົວທີ່ໃໝ່ມາຕັດ ຂະໜາດເທົ່ານິ້ວມີຕາມບ່ອນທີ່ມີຕາແລ້ວນຳໄປປູກ ໃນຊ່ວງຕົ້ນລະດູຝົນ ( ເດືອນ 4-5 ) ແລະ ເກັບກູ້ຫຼັງຈາກປູກໄດ້ 7 ເດືອນ (ເດືອນ 11-12 ) ( ສະໝຸນໄພໃນຄົວ ຮສ. ດຣ ວັນດີ ກິດສະພັນ 2541, ພືດສະໝຸນໄພ ນິດສີຖີ ເຮືອງຮັງສີ 2534, ປູກສະໝູນໄພໃຊ້ເອງ ພະຍອມ ຈອມພີທັກ 2537 ). ຄຸນປະໂຫຍດຂອງຂີງດຳ ແມ່ນສາມາດນຳ ມາປຸງແຕ່ງ ເປັນຢາສະໝຸນໄພ ເຊັ່ນ : ໃຊ້ສຳລັບເປັນຢາແກ້ເຈັບທ້ອງ, ແກ້ທ້ອງຍື່ງ ແລະ ຢາບຳລຸງກຳລັງ.

## ຂັ້ນຕອນທາງດ້ານເຕັກນິກວິທີການ

### 1. ການກະກຽມເນື້ອທີ່:

ເນື້ອທີ່ແມ່ນເປັນຂອງປະຊາຊົນໂດຍເອົາເນື້ອທີ່ໄຮ່ທີ່ປະຊາຊົນໄດ້ປູກພືດກະສິກຳ ເຊັ່ນ: ເຂົ້າ, ໝາກງາ, ສາລີ ແລະ ໝາກເດືອຍ. ເນື້ອທີ່ຂອງແຕ່ລະຄອບຄົວແມ່ນກຳນົດເອົາ 40x40 ແມັດ ເທົ່າກັບ 1.600 ຕາແມັດ. ການກະກຽມດິນປູກແມ່ນໄດ້ເຮັດ 2 ວິທີ ຄື: ວິທີ 1 ແມ່ນໄດ້ຂຸດດິນເຮັດເປັນໜານ ຫຼື ຄັນຄູກ້ວາງ 1 ແມັດ ແລະ ຍາວ 40 ແມັດ ຕາມແລວເສັ້ນລະດັບແລ້ວຈິ່ງໄລຍະຫ່າງລະຫວ່າງສິ້ນຄັນຄູຕໍ່ຄັນຄູແມ່ນ 3 ແມັດ ເພື່ອປູກພືດກະສິກຳສັບຫວ່າງ. ວິທີ 2 ແມ່ນບໍ່ໄດ້ຂຸດດິນ ແລະ ບໍ່ໄດ້ເຮັດເປັນຄັນຄູໝາຍ ຄວາມວ່າມີແຕ່ຂຸດປູກຂີງດຳໃສ່ເລີຍ.

### 2. ໄລຍະການປູກ:

ໄລຍະຫ່າງລະຫວ່າງຂຸມປູກແມ່ນ 50x50 ຊັງຕີແມັດ. ຂະໜາດຂອງຂຸມປູກແມ່ນ 15x15x15 ຊັງຕີແມັດ.

### 3. ການປູກ:

ຄວນປູກຂີງດຳ ໃນຕົ້ນລະດູຝົນ ( ເດືອນ4-5 ) ແລະ ຕ້ອງຂຸດຂຸມປູກໃຫ້ໄດ້ຕາມມາດຕະຖານທີ່ກຳນົດໄວ້ ຄື: 15x15x15 ຊັງຕີແມັດ ແລ້ວນຳເອົາຫົວຂີງດຳທີ່ກະກຽມໄວ້ນັ້ນລົງຂຸມ ໂດຍປິ່ນເບື້ອງທີ່ມີຕານັ້ນຂຶ້ນແລ້ວເອົາດິນຖົມໃຫ້ແໜ້ນພໍດີ.

### 4. ການບົວລະບັດຮັກສາ:

ພາຍຫຼັງປູກຂີງດຳໄດ້ 1 ເດືອນຂຶ້ນໄປຄວນສຳຫຼວດເບິ່ງເປີເຊັນການລອດຕາຍ ແລະ ການຂະຫຍາຍຕົວຂອງວັດສະພືດ (ຫຍ້າ) ທີ່ປົກຄຸມຂີງດຳ. ຄວນເສັຍຫຍ້າອອກຈາກຂີງດຳເດືອນລະຄັ້ງ ຍິ່ງເປັນການດີເພາະວ່າ ຂີງດຳມີຮອບວຽນການເກັບກູ້ສັ້ນ.

## 5. ການເກັບກູ້ :

ການເກັບກູ້ຂີງດຳແມ່ນຫຼັງຈາກປູກໄດ້ 7 ເດືອນ ກໍສາມາດເກັບກູ້ໄດ້. ວິທີການເກັບກູ້ແມ່ນນຳໃຊ້ສຽມຄ່ອຍໆ ຂຸດເອົາຫົວຂີງດຳ ຂື້ນມາອານາໄມ ແລະ ສ້ອມຮາກອອກໃຫ້ໝົດແລ້ວນຳເອົາຂີງໃສ່ເປົາທີ່ກຽມໄວ້ເພື່ອສະດວກໃຫ້ແກ່ການຂົນສົ່ງ. ຖອກຂີງດຳ ອອກຈາກເປົາຕາກໃຫ້ແຫ້ງພໍປະມານ 10-15 ວັນ ຫຼັງຈາກນັ້ນຈື່ງເອົາຂີງດຳເກັບຮັກສາໄວ້ໃນເປົາ ບ່ອນທີ່ມີອາກາດຖ່າຍເທດີ ພໍຮອດຕົ້ນລະດູຝົນປີຕໍ່ໄປຈື່ງນຳຂີງດຳທີ່ເກັບຮັກສາໄວ້ນັ້ນໄປປູກ ( ຄວນຄັດ ເລືອກເອົາຫົວຂີງດຳທີ່ໃຫຍ່ ແລະ ມີຄວາມສົມບູນດີທີ່ສຸດໄປປູກ ). ຂໍ້ຄວນລະວັງໃນຊ່ວງໄລຍະເວລາ ເກັບຮັກສາຂີງດຳຢູ່ນັ້ນບໍ່ໃຫ້ຂີງດຳສຳພັດກັບຄວາມປຽກຊຸ່ມ ເພາະຈະເຮັດໃຫ້ຂີງດຳ ແຕກໜໍ່ກ່ອນລະດູການປູກ.

## 6. ຜົນໄດ້ຮັບຈາກການທົດລອງ

ຜ່ານການປູກຂີງດຳທົດລອງໃນເນື້ອທີ່ໄຮ່ຂອງຊາວກະສິກອນເຂດພູດອຍສາມາດສະຫຼຸບຜົນໄດ້ຮັບດັ່ງນີ້:

- ຜົນຜະລິດຂອງຂີງດຳເພີ່ມຂື້ນ 70% ຂອງແນວພັນ.
- ການສົມທຽບລະຫວ່າງການປູກຂີງດຳໃສ່ໜານ(ຄັນຄູ) ແລະ ການປູກຂີງດຳແບບບໍ່ເຮັດເປັນໜານເຫັນວ່າວິທີປູກໃສ່ໜານຄັນ ຄູມີຜົນຜະລິດສູງກ່ວາ ແລະ ມີຄວາມແຕກຕ່າງກັນ 10-20%.
- ສ່ວນຜົນຜະລິດຂອງຂີງດຳ ທີ່ໄດ້ປູກແບບປະສົມປະສານກັບສາລີແມ່ນມີຜົນຜະລິດດີກ່ວາປູກປະສົມກັບໝາກເດືອຍ ແລະ ໝາກງາ.
- ຜົນຜະລິດຂອງຂີງດຳສະເລ່ຍຕໍ່ຄອບຄົວແມ່ນໄດ້ປູກ 80 ກິໂລຕໍ່ຄອບຄົວ ແລະ ຜົນໄດ້ຮັບສະເລ່ຍ 131,2 ກິໂລຕໍ່ຄອບຄົວ. ສຳລັບຜົນຜະລິດຂອງຂີງດຳໄດ້ມອບໃຫ້ເຈົ້າຂອງສວນຈຳນວນ 75% ຂອງຜົນຜະລິດທີ່ໄດຮັບ ອີກ 15% ແມ່ນໄດ້ເອົາຄືນມາເພື່ອເປັນແນວພັນສຳລັບປູກໃໝ່. ສ່ວນຜົນຜະລິດຂອງພືດກະສິກຳອື່ນໆຂອງປະຊາຊົນທີ່ປູກໃນສວນດັ່ງກ່າວນັ້ນແມ່ນມອບໃຫ້ເຈົ້າຂອງສວນທັງໝົດ.


| | | |
|---|---|---|
| ໂດຍ: 1. ທ. ບັນຊາ ທຳມະວົງ | ສູນຄົ້ນຄ້ວາປ່າໄມ້ | ໂທ: 020 2208283 |
| 2. ທ. ສີງກອນ ໄຊຍະລາດ | ສູນຄົ້ນຄ້ວາປ່າໄມ້ | ໂທ: 020 5323409 |
| 3. ທ. ຄຳຫຼ້າ ລັດສະໝີ | ພະນັກງານປະສານງານ ເມືອງ ໂພນໄຊ | |